ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ

ເລກທີ 654 /ຖວທ
ນະຄອນຫຼວງວຽງຈັນ, ວັນທີ 17/8/2021

# ຂໍ້ຕົກລົງ

## ວ່າດ້ວຍການແຕ່ງຕັ້ງກອງເລຂາເຄືອຄ່າຍພັດທະນາ, ສົ່ງເສີມ ແລະ ຄຸ້ມຄອງ ຈຸດໝາຍປາຍທາງການທ່ອງທ່ຽວ (DMN) ພາຍໃຕ້ໂຄງການພັດທະນາໂຄງລ່າງພື້ນຖານ ເພື່ອສົ່ງເສີມ ການທ່ອງທ່ຽວອະນຸພາກພື້ນແມ່ນ້ຳຂອງ ໄລຍະ II

- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 513/ນຍ, ລົງວັນທີ 18/09/2020, ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງຖະແຫລງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ.
- ອີງຕາມສັນຍາທຶນຊ່ວຍເຫຼືອລ້າ ລະຫວ່າງ ລັດຖະບານແຫ່ງ ສປປ ລາວ ແລະ ທະນາຄານພັດທະນາອາຊີ (ADB) ສຳລັບ ໂຄງການພັດທະນາໂຄງລ່າງພື້ນຖານ ເພື່ອສົ່ງເສີມການທ່ອງທ່ຽວອະນຸພາກພື້ນແມ່ນ້ຳຂອງ ໄລຍະ 2, ເລກທີ Grant No. 0599-Lao, ສະບັບລົງວັນທີ 16/10/2018.
- ອີງຕາມແຜນກິດຈະກຳປະຈຳປີ 2021 ຂອງໂຄງການພັດທະນາໂຄງລ່າງພື້ນຖານເພື່ອສົ່ງເສີມການທ່ອງທ່ຽວໄລຍະ 2.

### ລັດຖະມົນຕີ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຕົກລົງ:

**ມາດຕາ 01:** ແຕ່ງຕັ້ງກອງເລຂາຈັດຕັ້ງປະຕິບັດວຽກງານເຄືອຄ່າຍພັດທະນາ, ສົ່ງເສີມ ແລະ ຄຸ້ມຄອງ ຈຸດໝາຍປາຍທາງການທ່ອງທ່ຽວ **(DMN)** ພາຍໃຕ້ໂຄງການພັດທະນາໂຄງລ່າງພື້ນຖານ ເພື່ອສົ່ງເສີມການທ່ອງທ່ຽວອະນຸພາກພື້ນແມ່ນ້ຳຂອງ ໄລຍະ II ດັ່ງມີລາຍຊື່ລຸ່ມນີ້:

| | | | |
|---|---|---|---|
| 1. | ທ່ານ ຈຳພອນ ວົງສາ, | ຫົວໜ້າພະແນກ, ກົມພັດທະນາການທ່ອງທ່ຽວ | ເປັນຫົວໜ້າ |
| 2. | ທ່ານ ບຸນເສີດ ໄຊຍະແສງ, | ຮອງຫົວໜ້າພະແນກ, ກົມຄຸ້ມຄອງການທ່ອງທ່ຽວ | ເປັນຮອງ |
| 3. | ທ່ານ ອານຸສອນ ດວງໄສວັດ, | ຮອງຫົວໜ້າພະແນກ, ກົມໂຄສະນາການທ່ອງທ່ຽວ | ເປັນຮອງ |
| 4. | ທ່ານ ອາລຸນ ບຸນດວງມະໂນສຸກ, | ວິຊາການ, ກົມພັດທະນາການທ່ອງທ່ຽວ | ເປັນຄະນະ |
| 5. | ທ່ານ ນາງ ດວງໃຈ ໂພທິຈັກ, | ວິຊາການ, ສສວທ | ເປັນຄະນະ |
| 6. | ທ່ານ ນາງ ເພັດສະໝອນ, | ວິຊາການ, ສສວທ | ເປັນຄະນະ |
| 7. | ທ່ານ ທູນສະຫວັດ ຊານຸນຕີ, | ວິຊາການ, ກົມໂຄສະນາການທ່ອງທ່ຽວ | ເປັນຄະນະ |
| 8. | ທ່ານ ນາງ ສຸພາພອນ ງາມວິໄລ, | ວິຊາການ, ກົມຄຸ້ມຄອງການທ່ອງທ່ຽວ | ເປັນຄະນະ |

**ມາດຕາ 02:** ໜ້າທີ່ຂອງກອງເລຂາ ມີດັ່ງນີ້:

- ເປັນເຈົ້າການຈັດຕັ້ງປະຕິບັດແຜນກິດຈະກຳຕ່າງໆປະຈຳປີຂອງກອງເລຂາ;

- ກະກຽມກອງປະຊຸມເຄືອຂ່າຍພັດທະນາ, ສົ່ງເສີມ ແລະ ຄຸ້ມຄອງຈຸດໝາຍປາຍທາງການທ່ອງທ່ຽວລາວ ປະຈໍາກາງປີ ແລະ ປະຈໍາປີ;
- ເປັນເຈົ້າການໃນການນໍາໃຊ້ ແລະ ເບິ່ງແຍງຫ້ອງການເຄືອຂ່າຍພັດທະນາ, ສົ່ງເສີມ ແລະ ຄຸ້ມຄອງຈຸດໝາຍປາຍທາງການທ່ອງທ່ຽວ;
- ເປັນເຈົ້າການໃນການພົວພັນກັບຄະນະປະທານເຄືອຂ່າຍ, ປະທານໜ່ວຍງານສະເພາະກິດ ແລະ ບັນດາສະມາຊິກໃນການສະໜອງຂໍ້ມູນຂ່າວສານທີ່ຈໍາເປັນ ແລະ ຕິດພັນກັບວຽກງານຂອງເຄືອຂ່າຍ.

**ມາດຕາ 03:** ສໍາລັບງົບປະມານໃນການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ແມ່ນນໍາໃຊ້ງົບປະມານຂອງໂຄງການພັດທະນາໂຄງລ່າງພື້ນຖານເພື່ອສົ່ງເສີມການທ່ອງທ່ຽວ ໄລຍະ 2.

**ມາດຕາ 04:** ບັນດາກົມທີ່ກ່ຽວຂ້ອງ ແລະ ບັນດາທ່ານທີ່ໄດ້ຮັບການແຕ່ງຕັ້ງຈົ່ງຮັບຮູ້, ອໍານວຍຄວາມສະດວກ ແລະ ໃຫ້ການຮ່ວມມືຕາມພາລະບົດບາດ ແລະ ປະຕິບັດໜ້າທີ່ຕາມການມອບໝາຍ ໃຫ້ມີປະສິດທິຜົນ.

**ມາດຕາ 05:** ຂໍ້ຕົກລົງສະບັບນີ້ ປ່ຽນແທນຂໍ້ຕົກລົງສະບັບເລກທີ 147/ຖວທ, ລົງວັນທີ 4 ມີນາ 2021.

**ມາດຕາ 06:** ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ຮອງລັດຖະມົນຕີ**
**(ຜູ້ຊີ້ນໍາວຽກງານໂຄງການ)**

ອຸ່ນທອງ ຂາວພັນ